# ແຜນຍຸດທະສາດຂອງສະຫະພັນກິລາຣັກບີ້ແຫ່ງຊາດລາວ ສົກປີ 2020-2024

# LAO RUGBY FEDERATION STRATEGIC PLAN 2020-2024

ສ.ລ.ບ LAO RUGBY FEDERATION

| ເງື່ອນໄຂ ແລະ ຄວາມໝາຍສຳຄັນ \| **Key Terms and Definitions** | |
|---|---|
| ຣັກບີ້ ປະເພດ 7 ຄົນ<br>Rugby 7s | ມັນຫມາຍເຖິງການຫລິ້ນຣັກບີ້ 7 ຄົນ, ໃຊ້ກັບທີມນັກຫລິ້ນ 7 ຄົນ ແລະ 7 ນາທີ ຕໍ່ ເຄິ່ງ.<br>Rugby format with seven players per team and seven minute halves. |
| ຣັກບີ້ ປະເພດ 10 ຄົນ<br>Rugby 10s | ມັນຫມາຍເຖິງການຫລິ້ນຣັກບີ້ 10 ຄົນ, ໃຊ້ກັບທີມນັກຫລິ້ນ 10 ຄົນ ແລະ 10 ນາທີ ຕໍ່ ເຄິ່ງ.<br>Rugby format with ten players per team and ten minute halves. |
| ຣັກບີ້ ປະເພດ 15 ຄົນ<br>Rugby 15s | ມັນຫມາຍເຖິງການຫລິ້ນຣັກບີ້ 15 ຄົນ, ໃຊ້ກັບທີມນັກຫລິ້ນ 15 ຄົນ ແລະ 15 ນາທີ ຕໍ່ ເຄິ່ງ.<br>Rugby format with fifteen players per team and forty minute halves. |
| ຈຳປາບານ<br>Champa Ban | ຈຳປາບານແມ່ນ ຊື່ກິດຈະກຳຂອງສະຫະພັນທີ່ສ້າງຕັ້ງໂດຍສະຫະພັນ ກິລາຣັກບີ້ແຫ່ງຊາດລາວ ແລະ ສະມາຄົມລິເລີ່ມເພື່ອເປັນພາກ ສ່ວນພັດທະນາ ຣັກບີ້ ໃນ ສປປ ລາວ.<br>Champa Ban is the name of the youth rugby development activities that LRF manages in Lao PDR. |
| ຊາຍຟັນພາດອິດແບັກ<br>ChildFund Pass It Back | ແມ່ນໜຶ່ງໃນຜູ້ສະໜັບສະໜູນຂອງ ສະຫະພັນຣັກລາວບີ້ ຮ່ວມກັບ ChildFund Australia, Asia Rugby and Women Win ທີ່ສະໜັບສະໜູນດ້ານຫລັກສູດການຮຽນ ການສອນຣັກບີ້ ແລະ ທັກສະຊີວິດໃຫ້ກັບນັກກິລາທີ່ຢູ່ໃນຈຳປາບານ, ດ້ານການເງິນ ແລະ ການ ຈັດຕັ້ງໂຄງການ.<br>A rugby and life skills curriculum created by ChildFund Australia, Asia Rugby and Women Win that LRF implements to support the Champa Ban players and Coaches. |
| ເກັດອິທູຣັກບີ້ \| ເກັດອິນທູ ຣັກບີ້<br>Get Into Rugby | ແມ່ນການສອນຫລັກສູດຣັກບີ້ ໃຫ້ຜູ້ຫລິ້ນຂອງຈຳປາບານ, ເຊິ່ງໄດ້ຮັບການສະໜັບສະໜູນໂດຍ World Rugby and Asia Rugby.<br>A rugby curriculum supported by the World Rugby and Asia Rugby that is used to teach Champa Ban players. |
| LRF | ສະຫະພັນ ກິລາຣັກບີ້ແຫ່ງຊາດລາວ \| Lao Rugby Federation |
| AR | ຣັກບີ້ອາຊີ \| Asia Rugby |
| WR | ຣັກບີ້ລະດັບໂລກ \| World Rugby |
| LNOC | ຄະນະກຳມະການແຫ່ງຊາດຂອງ ສປປ ລາວ \| Lao National Olympic Committee |

## ເງື່ອນໄຂ ແລະ ຄວາມໝາຍສຳຄັນ | Key Terms and Definitions

| | |
|---|---|
| MoES | ກະຊວງສຶກສາທິການ ແລະ ກິລາ | Ministry of Education and Sports |
| ESD | ກົມກິລາລະດັບສູງ | Elite Sports Department |
| GoL | ລັດຖະບານແຫ່ງ ສປປ ລາວ | Government of the Lao PDR |
| RWC | ການແຂ່ງຂັນກິລາຣັກບີ້ລະດັບໂລກ | Rugby World Cup |
| EXCO | ຄະນະກຳມະການຣັກບີ້ອາຊີ | Asia Rugby Executive Committee |

**ວິທີການ**

ແຜນຍຸດທະສາດນີ້ແມ່ນຖືກສ້າງຂຶ້ນຈາກການປຶກສາຫາລືກັນ ຂອງທີມງານສະຫະພັນ ກິລາຣັກບີ້ແຫ່ງຊາດລາວ ເຊິ່ງປະກອບມີ ນັກກິລາຈາກສະໂມສອນທັງ 3, ຄູຝຶກທີມ ຊາດ, ສະມາຊິກຂອງຄະນະກຳມະການ, ຜູ້ເຂົ້າຮ່ວມຂອງຈຳປາບານ, ສະປອນເຊີ, ຜູ້ໃຫ້ທຶນ, ອາສາສະມັກ ແລະ ພະນັກງານຂອງສະຫະພັນ. ບົດສຳພາດລວມມີທັງພາສາ ລາວ ແລະ ພາສາ ອັງກິດ. ການສຳພາດແມ່ນໄດ້ເລີ່ມຕັ້ງແຕ່ເດືອນ 03 ປີ 2019 ຫາ ເດືອນ 12 ປີ 2019. ສະຫະພັນ ກິລາຣັກບີ້ແຫ່ງຊາດລາວ ຂໍຂອບໃຈ ກັບຜູ້ທີ່ມີ ສ່ວນຮ່ວມທັງໝົດ ໃນການພັດທະ ນາກິລາ ແລະ ໃຫ້ການຊ່ວຍເຫຼືອໃນເລື່ອງຕ່າງໆ ແລະ ເຮັດໃຫ້ສະຫະພັນ ກິລາຣັກບີ້ແຫ່ງຊາດລາວ ມີຄວາມເຂົ້າໃຈກ່ຽວກັບແຜນ ຍຸດທະສາດນີ້.

ແຜນຍຸດທະສາດນີ້ແມ່ນໄດ້ຮັບການອະນຸມັດຈາກ ຄະນະກຳມະການຂອງສະຫະພັນ ກິລາຣັກບີ້ແຫ່ງຊາດລາວ ໃນວັນທີ 20 ເດືອນ ມັງກອນ ປີ 2020 ແລະ ອະນຸມັດໂດຍ ທ່ານ ປະທານ ວິລະຍຸດ ລາທິກຸນ ໃນມື້ດຽວກັນ.

**Methodology**

This Strategic Plan was developed in consultation with a wide range of LRF stakeholders, including players from all domestic clubs, national team coaches, members of the Executive Board and Advisory Committee, Champa Ban participants, sponsors, donors, and LRF staff and volunteers. Surveys and interviews were conducted in English and Lao from March 2019 - December 2019. The LRF thanks all stakeholders for their inputs and contributions to developing the sport and welcomes dialogue with any and all about how the LRF can best realise this Strategic Plan.

This Strategic Plan was approved by the LRF Committee on 20 January 2020 and was approved by the LRF President Virayouth Rathikoun on the same date.

# ພາກນໍາສະເໜີ | **Introduction**

ສະຫະພັນ ກິລາຣັກບີ້ແຫ່ງຊາດລາວ ຖືກສ້າງຕັ້ງຂຶ້ນໃນປີ 2001. ນັບຕັ້ງແຕ່ນັ້ນມາ ສະຫະພັນ ກິລາຣັກບີ້ແຫ່ງຊາດລາວ ໄດ້ເຂົ້າເປັນສະມາຊິກຂອງ Asia Rugby ຢ່າງເຕັມ ໂຕ, ແລະ ໄດ້ ເປັນສະມາຊິກຂອງ World Rugby ຢ່າງບໍ່ເປັນທາງການ. ທີ່ສໍາຄັນທີ່ສຸດແມ່ນ ສະຫະພັນ ກິລາຣັກບີ້ແຫ່ງຊາດລາວ ໄດ້ລົງທະບຽນກັບກົມກິລາລະດັບສູງ ຂອງກະຊວງສຶກ ສາທິການ ແລະ ກິລາ.

The Lao Rugby Federation (LRF) was formed in 2001. Since then, the LRF has attained full membership of Asia Rugby (AR) and associate membership with the World Rugby (WR). Most importantly, the LRF is registered with the Elite Sports Department of the Lao Ministry of Education and Sports (MoES).

ສະຫະພັນ ກິລາຣັກບີ້ແຫ່ງຊາດລາວ ຄຸ້ມຄອງທຸກໆກິດຈະກໍາຂອງສະຫະພັນ ທີ ຈັດຕັ້ງປະຕິບັດຢູ່ໃນ ສປປ ລາວ, ເຊິ່ງມີໜ້າທີ່ ຜັນຂະຫຍາຍ ວິໄສທັດທີ່ວ່າ ທຸກໆຄົນມີ ໂອກາດໃນ ການ ເຂົ້າຮ່ວມການຫລິ້ນກິລາຣັກບີ້. ສະຫະພັນ ກິລາຣັກບີ້ແຫ່ງຊາດລາວ ເອົາໃຈໃສ່ໃນການພັດທະນາກິລາໂດຍຜ່ານການລິເລີ່ມພັດທະນາຂອງໂຮງຮຽນ ແລະ ຊຸມຊົນ, ສະໜັບສະໜູນ ຄົນທ້ອງຖິ່ນ ແລະ ທີມນັກກິລາ ເພື່ອການພັດທະນາ ແລະ ສ້າງໂຄງຮ່າງການຈັດຕັ້ງທີ່ມີຄຸນນະພາບ ເພື່ອໃຫ້ມີຄວາມໂປ່ງໃສ ແລະ ຄວາມຮັບຜິດ ຊອບທາງດ້ານການເງິນ ແລະ ການບໍລິຫານ ໃນການສະໜັບສະໜູນການກິລາ. ເວົ້າງ່າຍໆ ກໍ່ຄື: ກິລາຣັກບີ້ແມ່ນກິລາເພື່ອທຸກຄົນ ໃນ ສປປ ລາວ.

The LRF is the governing body for all rugby activities within the Lao PDR. It works to realise the vision of a Lao PDR in which all people have the opportunity to participate in the sport of rugby. LRF activities focus on developing the sport through school and community development initiatives, supporting local people and sport teams for development purpose and establishing a sound structure to provide transparent and accountable financial and administrative support to the sport. This can be simplified as: *Rugby for all in Laos.*

ພາລະກິດຂອງສະຫະພັນ ກິລາຣັກບີ້ແຫ່ງຊາດລາວ ແມ່ນການໃຫ້ໂອກາດແກ່ຜູ້ຍິງ ແລະ ຜູ້ຊາຍ, ເດັກຍິງ, ເດັກຊາຍ, ຜູ້ຫຼິ້ນ ທົ່ວໄປ ແລະ ຜູ້ຫຼິ້ນມືອາຊີບ ລວມທັງຄົນທີ່ ຢູ່ໃນເມືອງ ແລະ ເຂດຫ່າງໄກຊອກຫລີກ ເພື່ອເຂົ້າຮ່ວມຫຼິ້ນກິລາຣັກບີ້ ແລະ ຮັບປະກັນວ່າຜູ້ເຂົ້າຮ່ວມ ເຂົ້າໃຈຢ່າງຈະແຈ້ງກ່ຽວກັບໂອ ກາດ ໃນການພັດທະນາຕົນເອງ ແລະ ການມີສຸຂະພາບທີ່ດີ.

The mission of the LRF is to provide opportunities for men and women, boys and girls, general players and professional players including those in urban and rural areas to participate in the rugby, whilst ensuring that health benefits and personal development opportunities are realised to their fullest extent.

ພາລະກິດນີ້ຈະປະສົບຜົນສໍາເລັດ ໂດຍການຮັບປະກັນວ່າ ສະຫະພັນ ກິລາຣັກບີ້ແຫ່ງຊາດລາວ ມີຄວາມສາມາດ ສ້າງໃຫ້ມີການຫຼິ້ນທີ່ມີຄຸນນະພາບ ແລະ ໂອກາດໃນ ການ ເຂົ້າຮ່ວມກິດຈະກໍາ, ເຮັດໃຫ້ກະຊວງສຶກສາທິການ ແລະ ກິລາ ສະໜັບສະໜູນກິລາຫລາຍຂຶ້ນ ແລະ ມີສ່ວນຮ່ວມກັບສັງຄົມ, ທຸລະກິດ, ໂຮງຮຽນ, ສະຖາບັນ ແລະ ຄູ່ ຮ່ວມງານ ເພື່ອໃຫ້ໂອກາດ ແກ່ຜູ້ເຂົ້າຮ່ວມຄົນອື່ນໆ ທີ່ເຄີຍຫຼິ້ນມາແລ້ວ ແລະ ຍັງບໍ່ເຄີຍຫຼິ້ນ ໃຫ້ເຂົ້າເຖິງການຫຼິ້ນ ທີ່ມີຄຸນນະພາບ. ແຜນຍຸດທະສາດນີ້ຈະເປັນບັນທັດຖານ ສໍາຄັນ ທີ ສະຫະພັນ ຈະປະຕິບັດໜ້າທີ່ໃຫ້ປະສົບຜົນສໍາເລັດຕາມເປົ້າໝາຍທີ່ຕັ້ງໄວ້ໃນອີກ 5 ປີທາງໜ້າ.

ສະຫະພັນກິລາຣັກບີ້ ແຫ່ງຊາລາວ ມີຄວາມມຸ້ງໝັ້ນ ເພື່ອສົ່ງເສີມສິດສະ ເໝີພາບດ້ານບົດບາດ ຍິງ ຊາຍ ໃນທຸກແຜນງານຂອງສະຫະພັນ. ສະຫະພັນຈະຈັດສັນງົບປະມານ ແລະ ກິດຈະກໍາຈາກແຜນນີ້ໃຫ້ທົ່ວເຖິງ ເພື່ອທີ່ ສະຫະພັນຈະສາ ມາດບັນລຸໄດ້ຕາມ ເປົ້າໝາຍສໍາ ລັບທຸກເພດ.

This mission will be achieved by ensuring that the LRF has the ability to create high-quality competition and opportunities to participate in activities, increasing MoES support to the sport and engaging with communities, businesses, schools, institutions and other partners to provide an opportunity to existing and new players to access the sport. This Strategic Plan will define the key measures for LRF to achieve in the next five years.

The LRF maintains a strong commitment to gender equity across all of its programmes. Funding and activity planning from this plan will be allocated equally in order for the LRF to reach goals for all genders.

## ຄຸນນະທຳຫລັກ | **Core Values**

| ສະຫະພັນ ກິລາຣັກບີ້ແຫ່ງຊາດລາວ ຈະເຮັດວຽກເພື່ອປົກປ້ອງ ແລະ ສົ່ງເສີມ ຄຸນນະທຳຫຼັກ ຂອງສະຫະພັນ:<br>The LRF will work to preserve and promote the core values of Lao Rugby: | |
|---|---|
| 1 | ການເຄົາລົບນັບຖື | Respect |
| 2 | ຄວາມດຸໝັ່ນ | Perseverance |
| 3 | ຄວາມສາມັກຄີ | Solidarity |
| 4 | ການມີວິໄນ | Self-Discipline |
| 5 | ມິດຕະພາບ | Friendship |
| 6 | ການມີສຸຂະພາບທີດີ | Having good health |

# ພັນທະທີ່ສຳຄັນ | **Core Commitments**

| | |
|---|---|
| | ເພື່ອເຮັດໃຫ້ແຜນຍຸດທະສາດທີ່ວາງໄວ້ປະສົບຜົນສຳເລັດ, ສະຫະພັນ ກິລາຣັກບີ້ແຫ່ງຊາດລາວ ຈຶ່ງໄດ້ປະຕິບັດຕາມລຸ່ມນີ້.<br>To achieve the goals set in the Strategic Plan, the LRF will follow the following commitments: |
| 1 | ຮຽນຮູ້ຈາກການຝຶກຊ້ອມທີ່ດີ ແລະ ຮັບປະກັນເຖິງຄວາມໂປ່ງໃສ ແລະ ຄວາມຮັບຜິດຊອບທົ່ວທັງການຈັດຕັ້ງ.<br>Learn from good practice and ensure transparency and accountability across the organisation. |
| 2 | ເອົາໃຈໃສ່ໃນການສ້າງຄວາມສາມາດ ແລະ ພັດທະນາ ພະນັກງານລາວ ແລະ ອາສາສະມັກລາວ.<br>Focus on capacity building and development of Lao staff and volunteers. |
| 3 | ແບ່ງປັນການຮຽນຮູ້ກັບຄົນທີ່ເຮັດວຽກຮ່ວມກັນ ທັງຄົນທີ່ຢູ່ໃນທ້ອງຖິ່ນ, ພາກພື້ນ ແລະ ສາກົນ.<br>Share learning with people working together with the LRF locally, regionally and internationally. |
| 4 | ເຂົ້າໃຈຊັດເຈນຫລາຍຂຶ້ນກ່ຽວກັບບົດບາດຂອງກິລາຕໍ່ກັບການດຳລົງຊີວິດ.<br>Understand more about the role of sport in life. |
| 5 | ສ້າງການຮຽນຮູ້ໃຫ້ອົງການຈັດຕັ້ງ.<br>Establish learning for organisations. |
| 6 | ຮັບປະກັນຄວາມເທົ່າທຽມ ແລະ ການເຂົ້າຮ່ວມຂອງຜູ້ຍິງຢ່າງເຕັມທີ່ໃນກິລາ ທຸກໆປະເພດ<br>Ensure equality and full female participation at all levels. |
| 7 | ສ້າງສາຍສຳພັນກັບຜູ້ມີສ່ວນຮ່ວມທັງພາຍໃນທ້ອງຖິ່ນ ແລະ ສາກົນ.<br>Establish relationships with local and international stakeholders. |
| 8 | ມີສ່ວນຮ່ວມໃນການຮຽນຮູ້ ແລະ ຝຶກຊ້ອມທົ່ວອາຊີ.<br>Be involved in learning and training throughout Asia. |

# ເປົ້າໝາຍຍຸດທະສາດ | Strategic Goals

| | |
|---|---|
| ແຜນຍຸດທະສາດ ປະກອບມີ 6 ເປົ້າໝາຍ ທີ່ຈະຊ່ວຍໃຫ້ສະຫະພັນ ກິລາຣັກບີ້ແຫ່ງຊາດລາວ ປະຕິບັດໜ້າທີ່ ຕາມວິໄສທັດ ແລະ ພາລະກິດ ຂອງຕົນ ໃນ 5 ປີໃນຕໍ່ໜ້າ. ສະຫະພັນ ຈະດໍາເນີນການ ຕາມເປົ້າໝາຍດັ່ງນີ້:<br>This Strategic Plan consists of six strategic goals that will help the LRF work towards its vision and mission over the next five years. The LRF will implement the following strategic goals: | |
| 1 | ເປົ້າໝາຍ 1: ສ້າງ ແລະ ເຮັດໃຫ້ຄອບຄົວຣັກບີ້ລາວມີຄວາມເຂັ້ມແຂງ.<br>Goal 1: Build and strengthen the Lao Rugby family. |
| 2 | ເປົ້າໝາຍ 2: ຍົກລະດັບຄວາມອາດສາມາດ ທາງດ້ານການກິລາຣັກບີ ຂອງສະຫະພັນກິລາຣັກບີ້ ແຫ່ງຊາດລາວ.<br>Goal 2: Develop the LRF’s rugby competencies. |
| 3 | ເປົ້າໝາຍ 3: ຮັກສາ, ຊອກຫາ ແລະ ລະດົມທຶນຈາກຫຼາຍແຫຼ່ງ ເພື່ອຮັບປະກັນການເຄື່ອນໄຫວກິດຈະກໍາຂອງສະຫະພັນລາວຣັກບີ້ ໃຫ້ມີປະສິດທິພາບ.<br>Goal 3: Maintain, seek and mobilise different sources of funding in order to ensure effective activity implementation. |
| 4 | ເປົ້າໝາຍ 4: ເສີມຂະຫຍາຍພາບພົດຂອງສະຫະພັນລາວຣັກບີ້ ທັງພາຍໃນ ແລະ ຕ່າງປະເທດ.<br>Goal 4: Expand the LRF’s reputation locally and internationally. |
| 5 | ເປົ້າໝາຍ 5: ເສີມສ້າງ ການຮ່ວມມື ເພື່ອຜົນສໍາເລັດ ແລະ ການຂະຫຍາຍຕົວ ຢ່າງຍືນຍົງ.<br>Goal 5: Strengthen partnerships for sustainable success and growth. |
| 6 | ເປົ້າໝາຍ 6: ສ້າງຄວາມສາມາດໃນການຈັດຕັ້ງຂອງສະຫະພັນ ກິລາຣັກບີ້ແຫ່ງຊາດລາວ ເພື່ອໃຫ້ມີການຄຸ້ມຄອງທີ່ດີ ແລະ ການສະໜັບສະໜູນການພັດທະນາ<br>Goal 6: Build the LRF’s organisational capacity for better management and support for development. |

| ເປົ້າໝາຍ 1: ສ້າງ ແລະ ເຮັດໃຫ້ຄອບຄົວຣັກບີ້ລາວມີຄວາມເຂັ້ມແຂງ<br>**Goal 1: Build and Strengthen the Lao Rugby family** | |
|---|---|
| **ຈຸດປະສົງ/ບຸລິມະສິດ**<br>**Objectives/Priorities** | **ຕົວຊີ້ວັດ**<br>**Indicators** |
| 1. ສ້າງໂອກາດ ແລະ ຄວາມສາມາດ ໃຫ້ ແກ່ຄູຝຶກ, ກຳມະການ ແລະ ພະນັກງານຂອງສະຫະພັນລາວຣັກບີ້.<br>Create opportunities and build capacity for coaches, referees and LRF staff. | • ໄດ້ຮັບໃບປະກາດ ກຳມະການຣັກບີ້ໂລກລະດັບ 1 ຈຳນວນ 100 ໃບ ແລະ ລະດັບ 2 ຈຳນວນ 20 ໃບ ໃນໄລຍະ 5 ປີ.<br>Receive World Rugby Referee Level 1 = 100 certificates and Level 2 = 20 certificates in 5 years.<br>• ໄດ້ໃບປະກາດ ປະຖົມພະຍາບານ ລະດັບ 1 ຈຳນວນ 100 ໃບ ໃນໄລຍະ 5 ປີ.<br>Receive First Aid Certificate Level 1 = 100 certificates in 5 years.<br>• ໄດ້ຮັບໃບປະກາດ ການພັດທະນາຄວາມແຂງແຮງ ແລະ ສັກກະຍະພາບທາງຮ່າງກາຍ ລະດັບ1 ຈຳນວນ 100 ໃບ (ຜູ້ເຂົ້າຮ່ວມຝຶກອົບຮົມ 20 ຄົນ/ເທື່ອ), ລະດັບ 2 ຈຳນວນ 10 ໃບ. ໃນໄລຍະ 5 ປີ.<br>Receive Strength and Conditioning certificates Level 1 = 100 certificates (20 participants/ training) and Level 2 = 10 certificates in 5 years.<br>• ໄດ້ຮັບໃບປະກາດ ເປັນຄູຝຶກຣັກບີ້ໂລກ ລະດັບ 1 ຈຳນວນ 160 ໃບ, ລະດັບ 2 ຈຳນວນ 20 ໃບ ແລະ ລະດັບ 3 ຈຳນວນ 5 ໃບ ໃນໄລ ຍະ 5 ປີ.<br>Receive World Rugby Coach Level 1 = 160 certificates, Level 2 = 20 certificates and Level 3 = 5 certificates in 5 years.<br>• ຄູຝຶກ ຈຳປາບານໄດ້ຮັບໃບປະກາດ (ນັບທັງແມ່ນ ການອົບຮົມ,ການເຂົ້າຮ່ວມ) 1,000 ໃບ ໃນໄລຍະ 5 ປີ.<br>Champa Ban Coaches receive 1,000 Pass It Back certifications in 5 years (Pass It Back Coach Training, Attendance at courses).<br>• ພະນັກງານໄດ້ຮັບການຝຶກອົບ 20 ຄັ້ງໃນໄລຍະ 5 ປີ. ກ່ຽວກັບຫົວຂໍ້ການສ້າງຄວາມສາມາດ ເຊັ່ນ ການຫລຸດຜ່ອນຄວາມສ່ຽງ ແລະ ການມີສ່ວນຮ່ວມ,ການຈັດການການເງິນ,ການສື່ສານ, ການຈັດການໂຄງການ ແລະ ອື່ນໆ. ຫົວຂໍ້ແມ່ນຊ່ວຍສະຫະພັນປະຕິບັດກິດຈະກຳໃຫ້ຄ່ອງແຄ້ວຕາມແຜນງານ ແລະ ການບໍລິຫານໂຄງການ<br>Staff receive 20 different trainings in 5 years about capacity building topics like safeguarding, inclusion, finance, management, communication, project cycle management, etc. Topics that support LRF to deliver internationally sound administration to all activities and projects.<br><br>**ສິ່ງຢັ້ງຢືນ \| Evidence:**<br>- ໃບລົງທະບຽນ + ໃບປະກາດ \| Registration forms + Certificates |

| | |
|---|---|
| 2. ສ້າງໂອກາດ ແລະ ຄວາມສາມາດໃຫ້ແກ່ນັກກິລາ ເພື່ອໃຫ້ພວກເຂົາສາມາດພັດທະນາຈາກລຸ້ນນ້ອຍ.<br>Create opportunities and capacity building for players in order for them to graduate from the junior level. | • ຈັດການແຂ່ງຂັນຣັກບີ້ແທັກ ຣັກບີ້ແທັກ 32 ວັນຂອງການແຂ່ງຂັນຕໍ່ປີ ພາຍໃນ 5 ປີ. (160 ວັນຂອງການແຂ່ງຂັນທັງຫມົດໃນ5ປີ). ໃນປີນັ້ນໆຕ້ອງມີຫນ້ອຍສຸດ 5600ຄົນເຂົ້າຮ່ວມ ທົ່ວທຸກ 32ວັນການແຂ່ງຂັນແທັກ; ການແຂ່ງຂັນແມ່ນ1ມື້ການແຂ່ງຂັນ ແລະ 1ກຸ່ມອາຍຸໃນສະຖານທີ່ດຽວ.<br>Host 32 tag rugby competition days per year every year for 5 years (160 competition days in 5 years). During one year, there should be at least 5,600 participations across the 32 tag rugby competition days; a competition is considered one day of matches and one age group in one location.<br>• ຕັ້ງແຄ້ມ U15 8 ຄັ້ງ + ມີນັກກິລາ 100 ຄົນ ເຂົ້າຮ່ວມໃນແຕ່ລະຄັ້ງ ໃນ 5 ປີ.<br>Organise U15 rugby camps 8 times with 100 players participating each time in 5 years.<br>• ຈັດການແຂ່ງຂັນ U16 ການຫລິ້ນຕຳຈາກສະໂມສອນວຽງຈັນ ແລະ ຊຽງຂວາງ.  ຫຼິ້ນ 7 ຄົນ ຫລື 15 ຄົນ. ຈັດ 8 ຄັ້ງ ໃນ 5 ປີ.<br>Organise U16 Tackle Rugby competitions 8 times (Rugby 7s or Rugby 15s) between Vientiane and Xiengkhuang clubs in 5 years.<br>• ຈັດການແຂ່ງຂັນ U18 ການຫລິ້ນຕຳຈາກສະໂມສອນວຽງຈັນ ແລະ ຊຽງຂວາງ. ຫຼິ້ນ 7 ຄົນ ຫຼື 15 ຄົນ. ຈັດ 8 ຄັ້ງໃນ 5 ປີ.<br>Organise U18 Tackle Rugby Competitions (8 times) (Rugby 7s or Rugby 15s) between Vientiane and Xieng Khouang clubs in 5 years.<br>• ຈັດການແຂ່ງຂັນປະຈຳລະດູການ ຂອງຈຳປາບານທີ່ ມີນັກກິລາເຂົ້າຮ່ວມ 25,000 ຄົນ ໃນ 5 ປີ (ການຫລິ້ນ ແທັກ)<br>Organise Champa Ban seasonal Tag Rugby competitions with 25,000 players participating in 5 years.<br>• ຈັດການແຂ່ງຂັນຫຼິ້ນຂອງຈຳປາບານຢູ່ໂຮງຮຽນ ຫລິ້ນປະເພດ 7 ຄົນ 2 ຄັ້ງ ຕໍ່ 1 ປີ (ຫລິ້ນແທັກ ຫຼື ຫລິ້ນຕຳ): ວຽງຈັນ 6 ໂຮງຮຽນ, 12 ທີມ ຍິງ-ຊາຍ, ຊຽງ ຂວາງ 6 ໂຮງຮຽນ, 12 ທີມ ຍິງ-ຊາຍ. 2 ຄັ້ງ ຕໍ່ 1 ປີ. ຫລິ້ນແທັກ ຫລື ການຫລິ້ນຕຳ.<br>Organise Champa Ban Rugby 7s competitions at the school level twice a year (Tag Rugby or Tackle Rugby): Six schools from Vientiane with 12 teams (male and female) and six schools from Xieng Khouang Province with 12 teams (male and female).<br><br>**ສິ່ງຢັ້ງຢືນ \| Evidence:**<br>- ແບບຟອມລົງທະບຽນ ແລະ ບັນທຶກ ຢູ່ລະບົບ ເຊວຟອດສ \| Registration forms and records in the Salesforce System. |

| | |
|---|---|
| 3. ຂະຫຍາຍກິດຈະກຳກິລາຣັກບີ້ໄປສູ່ສະຖາບັນການສຶກສາ ແລະ ແຂວງອື່ນ.<br>Expand rugby activities to educational institutions and other provinces. | • ເຂົ້າຮ່ວມກິດຈະກຳ ຂອງມະຫາໄລເຊັ່ນ: ລາວທອບ, ຄອມເຊັນເຕີ້, ລັດຕະນະ ແລະ ຈັດການແຂ່ງຂັນ1 ການແຂ່ງຂັນແທັກ ຕໍ່ປີ ກັບລາວທອບ, ຄອມເຊັນເຕີ້, ລັດຕະນະ ເຂົ້າຮ່ວມຢ່າງໜ້ອຍ (8 ທີມ ຍິງ-8 ທີມ ຊາຍ).<br>Participate in college activities: Organise 1 tag competition per year with 3 colleges (Lao-Top College, Comcenter College, Rattana Business Administration College) participating (a minimum of 8 male and 8 female teams play in the competition).<br>• ຈັດການຈັດຝຶກອົບຮົມໃຫ້ຄູຢູ່ໂຮງຮຽນ 1ຄັ້ງຕໍ່ປີ ກັບອາຈານຈາກ ລາວທອບ, ຄອມເຊັນເຕີ້, ລັດຕະນະ.<br>Host 1 Level 1 coach training per year for teachers from 3 colleges.<br>• ສົ່ງທີມເຂົ້າແຂ່ງຂັນ VTE 10s ໃນລະດັບຕົວແທນທີມສະໂມສອນ ນັກສຶກສາ 2 ທີມ/ປີ.<br>Send 2 teams per year as student representative club teams for the VTE 10s competition.<br>• ກິດຈະກຳຈຳປາບານ ທີ່ໄດ້ລົງຖະບຽນນຳສະຫະພັນລາວຣັກບີ້ ໄປ 2 ແຂວງໃຫມ່ ໃນປີ 2020-2024.<br>Expand Champa Ban activities registered with the Lao Rugby Federation to go to new Two provinces by 2024.<br><br>**ສິ່ງຢັ້ງຢືນ \| Evidence:**<br>- ຈຳນວນຜູ້ລົງທະບຽນໃນແຕ່ລະການແຂ່ງຂັນ ແລະ ຄະແນນທີ່ເອົາລົງໃນເວບໄຊ \| The number of players registering in each competition and scores posted on the website. |

| | |
|---|---|
| 4. ສືບຕໍ່ສ້າງຄວາມເຂັ້ມແຂງ ແລະ ເພີ່ມຈຳນວນນັກກິລາເຂົ້າໃນສະໂມສອນ. Continue to strengthen capacity building and increase the number of players for the club. | • ຝຶກອົບຮົມໃຫ້ຜູ້ບໍລິຫານສະໂມສອນ 1 ຄັ້ງ/ປີ<br>Provide training to the board members of the club once a year.<br>• ມີນັກກິລາທີ່ລົງທະບຽນ ຮ່ວມນຳສະໂມສອນ: \| The number of player enrollment with the club:<br>- 2020: 500 ຄົນ (ຫລິ້ນຕໍາ) 50% ຍິງ-ຊາຍ.<br>2020: 500 players with 50% male and female (Tackle Rugby).<br>- 2021: 600 ຄົນ (ຫລິ້ນຕໍາ) 50% ຍິງ-ຊາຍ.<br>2021: 600 players with 50% male and female (Tackle Rugby).<br>- 2022: 700 ຄົນ (ຫລິ້ນຕໍາ) 50% ຍິງ-ຊາຍ.<br>2022: 700 players with 50% male and female (Tackle Rugby).<br>- 2023: 800 ຄົນ (ຫລິ້ນຕໍາ) 50% ຍິງ-ຊາຍ.<br>2023: 800 players with 50% male and female (Tackle Rugby).<br>- 2024: 900 ຄົນ (ຫລິ້ນຕໍາ) 50% ຍິງ-ຊາຍ.<br>2024 900 players with 50% male and female (Tackle Rugby).<br>• ກອງປະຊຸມຮ່ວມກັບສະໂມສອນ 4 ຄັ້ງ/ປີ.<br>Organise meetings with the clubs four times per year.<br><br>**ສິ່ງຢັ້ງຢືນ \| Evidence:**<br>- ປະຊຸມຄະນະຜູ້ບໍລິຫານສະໂມສອນ = ເອກະສານການລົງທະບຽນ Board Member Club Training Attendance list<br>- ແຕ່ລະສະໂມສອນແມ່ນຕ້ອງໄດ້ສົ່ງເຈ້ຍລົງທະບຽນລາຍຊື່ຂອງສະໂມສອນນັ້ນໆແຕ່ລະປີ ແລະ ຖ້າມີຜູ້ຫລິ້ນເພີ່ມແມ່ນໃຫ້ລາຍງານຫາພະນັກງານສະຫະພັນ ຝ່າຍວຽກງານສະໂມສອນ, ສະມາຊິກແຕ່ລະປີແມ່ນໃຫ້ນັບເປັນຄົນດຽວ ທີ່ເຂົ້າຮ່ວມ Each club must submit a table of all the members registered in their club once per year and any new members who join after the submission have to send the name to LRF Club Officer; a club member us counted for a minimum of 1 participation each year.<br>- ວາລະການປະຊຸມສະໂມສອນ ເນື້ອໃນບົດປະຊຸມ ແລະ ຜູ້ເຂົ້າຮ່ວມ ສຳລັບແຕ່ລະປະຊຸມສະໂມສອນ Meeting agenda/ minutes and attendance list for each club meeting. |

## ເປົ້າໝາຍ 2: ຍົກລະດັບຄວາມອາດສາມາດ ທາງດ້ານການກິລາຣັກບີ ຂອງສະຫະພັນກິລາຣັກບີ້ ແຫ່ງຊາດລາວ
## Goal 2: Develop the LRF's Rugby Competencies

| ຈຸດປະສົງ/ບຸລິມະສິດ<br>**Objectives/Priorities** | ຕົວຊີ້ວັດ<br>**Indicators** |
|---|---|
| 1. ຈັດການແຂ່ງຂັນກິລາຣັກບີ້ທີ່ມີຄູນນະພາບ ພາຍໃນປະເທດ.<br>Organise quality rugby competitions domestically. | • ຈັດການແຂ່ງລະດັບແຂວງ ຂອງຈໍາປາບານ 20 ຄັ້ງ/ແຂວງ ໃນ ສາມ ແຂວງ ພາຍໃນ 5 ປີ.<br>Organise Champa Ban competitions at provincial level in three provinces, 20 times per province over 5 years.<br>• ຈັດການແຂ່ງຂັນລະດັບ ສະໂມສອນ 15 ຄັ້ງ/5ປີ (ຫຼິ້ນຕໍາຂອງລຸ້ນອາຍຸ 16+).<br>Organise competitions at club level 15 times over 5 years (Tackle Rugby for U16+).<br>• ການແຂ່ງຂັນວຽງຈັນນານາຊາດ ປະເພດ 10 ຄົນ 5 ຄັ້ງ/5ປີ (ຫຼິ້ນຕໍາຂອງລຸ້ນອາຍຸ 17+).<br>Organise Vientiane 10s Competitions 5 times over 5 years (Tackle Rugby for U17+).<br>• ໃນວຽງຈັນເທັ້ນ ລໍາດັບທີມທີ່ເປັນແຊ້ມ ມີການປ່ຽນແປງ ໃນການເຂົ້າຮ່ວມການແຂ່ງຂັນ (ທີມໃຫມ່ມີຜົນງານເປັນແຊ້ມປ່ຽນກັນ) ໃນ 5ປີ. ນັດຊີງຊະນະເລີດແມ່ນຄະແນນໃກ້ຄຽງກັນ.<br>In Vientiane 10s annual competition, championship rank changes during the competitions for five years (new team which has outstanding performance takes turns to be championship) during 5 years. Scores in the Final are close to each other.<br>• ໃນວຽງຈັນເທັ້ນ  ແຕ່ລະທີມວາງຄະແນນໄດ້ (ທຸກທີມຕ້ອງມີຄະແນນທີ່ບໍ່ແມ່ນ 0 ຄະແນນ).<br>In Vientiane 10s annual competition, each team get scores for each game (None of the teams scores '0').<br><br>**ສິ່ງຢັ້ງຢືນ \| Evidence:**<br>- ມີແພດ ແລະ ໜ່ວຍກູ້ໄພ \| Presence of trained medical and rescue staff<br>- ກໍາມະການທີ່ໄດ້ຜ່ານການຝຶກອົບຮົມ \| Certified Referees<br>- ມີເດີນແຂ່ງຂັນທີ່ປອດໄພ 1 ແຫ່ງ \| Having 1 safe stadium/sport ground<br>- ມີ 80 ຄົນທີ່ເປັນກອງເຊຍ ທີ່ບໍ່ແມ່ນນັກກິລາ \| Having 80 cheering people who are not players<br>- ນັບຈໍານວນການແຂ່ງຂັນ \| Count the number of competitions organised<br>- ເກັບຂໍ້ມູນໃນເວັບໄຊ້ ເຊັ່ນ ຄະແນນແຕ່ລະຄັ້ງທີ່ມີເກມການແຂ່ງຂັນ.ນັກກິລາແຕ່ລະການແຂ່ງຂັນ ທັງແມ່ນໃນວຽງຈັນເທັ້ນ ແລະ ຄັນເລີ້ຫລີກ \| Keep scores, dates and times of all matches on website for all matches played in Laos – club, Vientiane 10s, colours league, all. |

<table>
<tr>
<td>2.</td>
<td>ເຂົ້າຮ່ວມແຂ່ງຂັນກິລາຣັກບີ້ ທີ່ມີຄູນນະພາບໃນ ລະດັບສາກົນ.<br>Participate in quality rugby competitions at international level.</td>
<td>
• ທີມນາຄາ ເຂົ້າຊີງຊະນະເລີດ 10 ເທື່ອ ໃນ 5 ປີ ປະເພດ 7 ຄົນ, 10 ຄົນ, 15 ຄົນ (ຍິງລຸ້ນໃຫຍ່ 18+).<br>Lao Nagas Team reaches the final round 10 times in five years: Rugby 7s, 10s and 15s (female players ages 18+).<br>
• ທີມນາຄາ ເຂົ້າຊີງຊະນະເລີດ 10 ເທື່ອ ໃນ 5 ປີ ປະເພດ 7 ຄົນ, 10 ຄົນ, 15 ຄົນ (ຊາຍລຸ້ນໃຫຍ່18+)<br>Lao Nagas Team reaches the final round 10 times in five years: Rugby 7s, 10s and 15s (male players ages 18+).<br>
• ທີມນາຄາ ເຂົ້າຊີງຊະນະເລີດ 5 ເທື່ອ ໃນ 5 ປີ ປະເພດ 7 ຄົນ, 10 ຄົນ, 15 ຄົນ (ຍິງ-ຊາຍລຸ້ນນ້ອຍ 14+).<br>Lao Nagas Team reaches the final round five times in five years: Rugby 7s, 10s and 15s (junior female and male players ages 14+).<br>
• ທີມຊາຍຊະນະທີມ ອັນດັບ 4 ຂອງອາຊຽນ ປະເພດ 7 ຄົນ.<br>Male team defeats the 4th ranked Southeast Asian 7s Team.<br>
• ທີມຍິງວາງ 3 ທຣ້າຍ ທີມໄທ ປະເພດ 7 ຄົນ.<br>Female team scores 3 tries against the Thai National team.<br>
• ທີມຊາຍສາມາດເຂົ້າລະດັບຄັຣບຂອງລາຍການເອເຊຍເຊເວັ້ນໂທຟີ້ ປະເພດ 7 ຄົນ.<br>Male team is able to reach the Cup Level of Asian World Trophy Rugby 7s.<br>
• ທີມຍິງໄດ້ເຂົ້າການແຂ່ງຂັນລາຍການເອເຊຍເຊເວັ້ນໂທຟີ້ ປະເພດ 7 ຄົນ.<br>Female team takes part in the Asia Rugby Trophy 7s.<br>
• ທີມຍິງ ແລະ ທີມຊາຍ ວາງຄະແນນໄດ້ທຸກເກມ ປະເພດ 7 ຄົນ.<br>Both male and female teams are able to score in all rugby 7s games.<br>
• ອັນດັບທີມດີກ່ວາຄັ້ງລ່າສຸດ ແລະ ດີຂຶ້ນໃນແຕ່ລະປີ ປະເພດ 7 ຄົນ.<br>The Lao team’s ranking in Rugby 7s is better each year.<br>
• ປະເພດ 15 ຄົນ, ທີມຍິງ 1 ທີມ ໄດ້ຊະນະ ໃນ ດີວີຊັ່ນ 1<br>Female Rugby 15s team wins a match in Division 1.<br>
• ປະເພດ 15 ຄົນ, ທີມຊາຍຊະນະທີມການແຂ່ງຂັນດີວີຊັ່ນ 3<br>Male team Rugby 15s wins a match in Division 3.<br><br>
ສິ່ງຢັ້ງຢືນ | Evidence:<br>
- ເກັບຂໍ້ມູນໃນເວັບໄຊ້ ເຊັ່ນ ຄະແນນແຕ່ລະຄັ້ງທີ່ມີເກມການແຂ່ງຂັນ.ນັກກິລາແຕ່ລະການແຂ່ງຂັນ ທັງແມ່ນໃນວຽງຈັນເທົ້ນ ແລະ ຄັນເລີ໊ຫລີກ | Keep scores, dates and times of all matches on website for all matches played in Laos – club, Vientiane 10s, Colours League, all.
</td>
</tr>
</table>

| ເປົ້າໝາຍ 3: ຮັກສາ, ຊອກຫາ ແລະ ລະດົມທຶນຈາກຫຼາຍແຫຼ່ງ ເພື່ອຮັບປະກັນການເຄື່ອນໄຫວກິດຈະກຳ ຂອງສະຫະພັນລາວຣັກບີ້ ໃຫ້ມີປະສິດທິພາບ.<br>**Goal 3: Maintain and Mobilise Different Sources of Funding to Drive the LRF to Effectively Reach Strategic Objectives** | |
|---|---|
| **ຈຸດປະສົງ/ບຸລິມະສິດ<br>Objectives/Priorities** | **ຕົວຊີ້ວັດ<br>Indicators** |
| 1. ຫາວິທີໃນການເພີ່ມທຶນຈາກຫຼາຍ ແຫ່ງ ແລະ ເພີ່ມລາຍຮັບຂອງສະຫະ ພັນລາວຣັກບີ້.<br>Find more sources of funding and increase the LRF’s income. | • ສ້າງລາຍຮັບເພີ່ມຂຶ້ນຈາກເງິນລາຍຮັບທີ່ສະຫະພັນມີ 20 % ພາຍໃນປີ 2024.<br>Increase the income from the LRF’s activities 20% by 2024.<br>• ສ້າງຜົນກຳໄລຂອງສະຫະພັນຈາກລາຍການແຂ່ງປະຈຳປີ ຫລື ກິດຈະກຳ ທີ່ພຽງພໍສຳລັບລາຍຈ່າຍ (ບໍ່ຂາດທຶນ).<br>Make sufficient revenue for the Federation from organising annual competitions or activities to cover expenditure (no losses).<br><br>**ສິ່ງຢັ້ງຢືນ \| Evidence:**<br>- ບົດລາຍງານການເງິນປະຈຳປີ Annual Report Finance Figures |
| 2. ເພີ່ມທຶນຈາກຫຼາຍແລ່ງທຶນ ເພື່ອຮັບປະກັນການເຄື່ອນໄຫວກິດຈະກຳຂອງສະຫະພັນ ລາວຣັກບີ້ໃຫ້ເຕີບໂຕໃນໄລຍະຍາວ.<br>Increase funding from multiple sources to guarantee the LRF’s activity implementation in the long run. | • ເຊັນສັນຍາກັບຜູ້ໃຫ້ທຶນໃນໄລຍະຍາວ 2-3 ປີ (5 ສັນຍາ).<br>Sign long-term contracts (2-3 years) with donors (5 contracts).<br>• ເພີ່ມຈຳນວນຜູ້ສະໜັບສະໜູນຈາກບໍລິສັດ 30 ບໍລິສັດ ພາຍໃນປີ 2024.<br>Increase the number of sponsors from private companies to 30 companies by 2024.<br>• ເພີ່ມຈຳນວນຜູ້ໃຫ້ທຶນຊ່ວຍເຫລືອລ້າ 100% (4 ທຶນ) ພາຍໃນປີ 2024.<br>Increase the number of grant donors by 100% (4 donors) by 2024.<br><br>**ສິ່ງຢັ້ງຢືນ \| Evidence:**<br>- ເກັບມ້ຽນເອກະສານສັນຍາຜູ້ສະໜັບສະໜູນ \| Sponsor contracts on file with LRF<br>- ບົດລາຍງານລາຍຮັບປະຈຳປີ \| Annual income report |

<table>
<tr>
<td>3. ສືບຕໍ່ສາຍສຳພັນ ແລະ ຮັກສາຜູ້ສະໜັບສະໜູນທຶນ ເພື່ອຮັບປະກັນ ການເຄື່ອນໄຫວກິດຈະກຳຂອງສະຫະພັນລາວຣັກ ບີ້ ໃຫ້ມີປະສິດທິຜົນ.<br>Maintain good relationships with and maintain existing grant donors to guarantee the effectiveness of the LRF’s activity implementation.</td>
<td>• 85% ຈຳນວນບໍລິສັດທີ່ສືບຕໍ່ເຊັນສັນຍາໃຫມ່ທີ່ມີເອກະສານໃນການຊ່ວຍແຕ່ລະປີ.<br>85% The number of companies renewing their supporting contracts with the LRF each year.<br>• ສົ່ງບົດລາຍງານການເຄື່ອນໄຫວຂອງກິດຈະກຳ ໃຫ້ຜູ້ສະໜັບສະໜູນ ຫຼື ຜູ້ໃຫ້ທຶນ (ອີງຕາມເງື່ອນໄຂຂອງແຕ່ລະຜູ້ ໃຫ້ທຶນ).<br>Submit activity implementation reports to sponsors/donors (depending on each donor’s criteria).<br>• ມີກະຕ່າຂອງຂັວນອວຍພອນທາງພາກລັດ ເນື່ອງໃນປີໃໝ່ສາກົນ 1 ຄັ້ງ/ປີ.<br>Prepare a New Year basket for government partners 1 time per year.<br>• ສະຫນອງການໃຫ້ຄຳຂອບໃຈກັບຜູ້ສະຫນັບສະຫູນລະດັບແພັດທິນ້ຳ, ໂກຣ໌ພາດຣ ທັງມີໃບຍ້ອງຍໍຈາກລັດ2 ເທື່ອໃນລະຫວ່າງໄລຍະຂອງແຜນຍຸດທະສາດ<br>Provide Platinum, Gold PLUS sponsors with Recognition Certificate from the government Two times during the strategic plan.<br><br>ສິ່ງຢັ້ງຢືນ | Evidence:<br>- ເອກະສານທີ່ມີຂໍ້ມູນຕິດຕໍ່ຜູ້ສະຫນັບສະຫນູນ ກັບສະຫະພັນ | Sponsor contracts on file with LRF<br>- ບົດລາຍງານລາຍຮັບຂອງປີ | Annual income report for each year<br>- ຮູບກັບພາກສ່ວນລັດທີ່ສະຫນັບສະຫນູນ ຫນຶ່ງເທື່ອຕໍ່ປີ | Photo with government partners each year<br>- ຮັບທີ່ຮັບໃບຍ້ອງຍໍ | Photo of recognition certificate</td>
</tr>
</table>

| ເປົ້າໝາຍ 4: ເສີມຂະຫຍາຍພາບພົດຂອງສະຫະພັນລາວຣັກບີ້ ທັງພາຍໃນ ແລະ ຕ່າງປະເທດ<br>**Goal 4: Build the LRF's Reputation Locally and Internationally** | | |
|---|---|---|
| | **ຈຸດປະສົງ/ບຸລິມະສິດ<br>Objectives/Priorities** | **ຕົວຊີ້ວັດ<br>Indicators** |
| 1. | ເສີມສ້າງເອກະລັກ, ຄຸນຄ່າ ແລະ ຈຸດຢືນຂອງສະຫະພັນກິລາຣັກບີ້ແຫ່ງຊາດລາວ.<br>Enhance the LRF's identity, value, and position. | • ອັບເດດການເຄື່ອນໄຫວ ກິດຂະກຳຜ່ານສື່ທາງອອນລາຍ ແລະ ສື່ມວນຊົນ 1ຄັ້ງ/1ງານ.<br>Update LRF's activities via social media and mass media 1 time per event.<br>• ກິດຈະກຳແນະນຳກິລາຣັກບີ້ 2ແຂວງໃນ5ປີ(ແນ່ໃຈວ່າຄົນໃຫມ່ໄດ້ຮຽນຮູ້ກິລາຣັກບີ້ ແລະ ມີການຕິດຕາມສື່ຂ່າວ- ສານຂອງສະຫະພັນ ໃນພາຍພາກຫນ້າ.<br>Introduce rugby to 2 provinces in 5 years (ensure new people learn what is rugby and can follow on LRF's social media in the future).<br>• ລົງຂ່າວທຸກກິດຈະກຳລວມທັງການແຂ່ງຂັນ ໃນໜັງສືພິມ, ໂທລະພາບ ແລະ/ຫຼື ການຖ່າຍທອດສົດ; ຂໍ້ມູນຈາກ ຫນັງສືພິມທີ່ເກັບໄວ້ 18ຄັ້ງຕໍ່ 8ເດືອນ.<br>Promote all activities including competitions on newspapers, TVs and/or live programmes; featured in news sources 18 times in 6 months.<br><br>**ສິ່ງຢັ້ງຢືນ \| Evidence:**<br>- ເອກະສານເຂົ້າຮ່ວມທີ່ເປັນກິດຈະກຳການເຜີຍແຜ່ຂໍ້ມູນຂ່າວສານ \| Attendance form from outreach activities<br>- ແຜນກິດຈະກຳການເຜີຍແຜ່ຂໍ້ມູນຂ່າວສານ \| Activity plan from outreach activities<br>- ຮູບຂອງກິດຈະກຳເຜີຍແຜ່ຂໍ້ມູນຂ່າວສານ \| Photos from outreach activities<br>- ຫນັງສືພິມ ແລະ ຫລັກຖານການລົງຂ່າວທາງສາທາລະນະໃນເບດແຄ້ມ \| Newspaper articles and evidence from publications stored in Basecamp |

| | | |
|---|---|---|
| 2. | ຮັກສາພາບພົດທີ່ດີຂອງສະຫະພັນລາວລັກບີ້ ໂດຍ ການສ້າງ ແລະ ນໍາສະເໜີ ວຽກງານຜ່ານສື່ທາງອອນລາຍ ແລະ ສື່ສານມວນຊົນ.<br>Maintain the positive reputation of the LRF by creating and advertising its activities through social media and mass media. | • ຍອດຜູ້ຕິດຕາມໃນເພດສ ຂອງສະຫະພັນ:<br>- 2020: 500 ຜູ້ຕິດຕາມ<br>- 2021: 2,500 ຜູ້ຕິດຕາມ<br>- 2022-2024: 5,000 ຜູ້ຕິດຕາມຕໍ່ປີ<br>Increase the number of followers on the LRF's Facebook page:<br>- 2020: 500 Followers<br>- 2021: 2,500 Followers<br>- 2022-2024: 5,000 Followers per year<br>• ຈໍານວນຜູ້ຕິດຕາມ ໃນອິນສະຕາແກຣມ - ທະວິດເຕີ້ ຂອງສະຫະພັນ.<br>Increase the number of followers on LRF's Instagram.<br>- 400ການເບິ່ງເຫັນຕໍ່ເດືອນ 400 views per month<br>- 2400 ການເບິ່ງເຫັນຕໍ່ 6ເດືອນ 2400 views per 6 month<br>• ມີຜູ້ຄົ້ນຫາ ເຂົ້າມາເບິ່ງ ເພດສ, ອິນສະຕາແກຣມ (100 ຄົນເຂົ້າເບິ່ງຕໍ່ອາທິດ).<br>People search for and visit the LRF's Facebook Page, Instagram (100 people per week).<br>• ມີ 200 ຄົນເຂົ້າເບິ່ງສະຕໍຣີ້ ຕໍ່ອາທິດ.<br>200 people view stories per week.<br>• ຄົນຕິດຕາມ ເວບໄຊ໌ຂອງສະຫະພັນ (100 ຄົນເຂົ້າເບິ່ງຕໍ່ເດືອນ).<br>Followers on the LRF's website (100 visitors per month).<br><br>**ສິ່ງຢັ້ງຢືນ \| Evidence:**<br>- ບົດລາຍການການສື່ສານປະຈໍາເດືອນ ທັງແມ່ນ ທະວິດເຕີ້,ອິນສະຕຣາແກຣມ, ເຟດສບຸກ Social media reports – Twitter, Facebook, Instagram |

| | | |
|---|---|---|
| 3. | ໃຫ້ຄວາມຮູ້ກ່ຽວກັບກິລາຣັກບີ້ລາວ ແລະ ສະຫະພັນ ທັງພາຍໃນ ແລະ ຕ່າງປະເທດ.<br>Promote Lao rugby and the LRF locally and internationally. | • ເຂົ້າຮ່ວມກິດຈະກຳຕ່າງໆ ເພື່ອເຜີຍແຜ່ກ່ຽວກັບກິລາຣັກບີ້ 10 ຄັ້ງໃນ 5 ປີ (ແລ່ນມາລະທອນ, ງານວັນເດັກ, ງານວັນແມ່ຍິງ ແລະ ອື່ນໆ)<br>Participate in public activities to propagate the rugby sport - 10 times in 5 years (such as marathon, Children's Day events, Women's Day events, etc.).<br>• ຖ່າຍທອດສົດລາຍການໃຫຍ່ ແລະ ຈຳປາບານ 5 ຄັ້ງ/ປີ.<br>Broadcast live programs of big events and Champa Ban 5 times per year.<br>• ໂພດສື່ສາທາລະນະ ກ່ຽວກັບການປ່ຽນແປງຈາກການພັດທະນາ ກ່ຽວກັບທັກສະຣັກບີ້, ທັກສະຊີວິດ ແລະ ບັນທຶກຄູຝຶກ 50 ຄັ້ງ/ປີ<br>Post on social media stories from Rugby Development, Life skills development and coach development 50 times per year.<br><br>**ສິ່ງຢັ້ງຢືນ \| Evidence:**<br>- ຮູບຈາກກິດຈະກຳຕ່າງໆ \| Photos from public events<br>- ບົດລາຍງານຂອງພະນັກງານທີ່ເຂົ້າຮ່ວມ \| Staff report from public events<br>- ລິ້ງໃນການຖ່າຍທອດສົດ \| Live stream links<br>- ບົດຄວາມການປ່ຽນແປງໃນເວັບໄຊ໌ \| Stories available on website |

# ເປົ້າໝາຍ 5: ເສີມສ້າງ ການຮ່ວມມື ເພື່ອຜົນສໍາເລັດ ແລະ ການຂະຫຍາຍຕົວ ຢ່າງຍືນຍົງ
# Goal 5: Strengthen Partnerships for Sustainable Success and Growth

| ຈຸດປະສົງ/ບຸລິມະສິດ<br>Objectives/Priorities | ຕົວຊີ້ວັດ<br>Indicators |
|---|---|
| 1. ເຮັດວຽກຮ່ວມກັບກົມກິລາລະດັບສູງ ແລະ ຄະນະກໍາມະການກິລາໂອລິມປິກແຫ່ງຊາດ ເພື່ອຮັບປະກັນວ່າ ກິລາຣັກບີ້ ແມ່ນກິລາຂອງທຸກຄົນໂດຍສະເພາະໃນ ຊັ້ນໂຮງຮຽນປະຖົມ, ມັດທະຍົມ ແລະ ວິທະຍາໄລ.<br>Collaborate with the Department of Elite Sports and National Olympic Committee to ensure that rugby is a sport for everyone, especially at the primary and secondary schools and colleges. | • ຈັດກອງປະຊຸມຮ່ວມກັບກົມກິລາ ແລະ ໂອລິມປິກແຫ່ງຊາດ 1-2 ຄັ້ງ/ປີ<br>Organise meetings with Department of Elite Sports and National Olympic Committee 1-2 times per year.<br>• ເຂົ້າຮ່ວມກິດຈະກໍາກັບ ຫລື ຈັດກິດຈະກໍາ ກັບ ບັນດາແຂວງ, ເມືອງ, ໂຮງຮຽນ:ສະຫະພັນຈັດ ຫລື ໂຮງຮຽນຈັດການອົບຮົມ,ປະຊຸມທີ່ມີການຖືກເຊີນເຂົ້າຮ່ວມກັບແຂວງ ແລະ ໂຮງຮຽນ \| Participate or host activities (school hosted events or LRF trainings or meetings that teachers are invited to) in partnership with provinces, districts and schools:<br>- ນະຄອນຫລວງ: 27 ໂຮງຮຽນ ຈາກ 4 ເມືອງ \| Vientiane Capital: 27 schools from 4 districts<br>- ແຂວງວຽງຈັນ: 25 ໂຮງຮຽນ ຈາກ 2 ເມືອງ \| Vientiane Province: 25 schools from 2 districts<br>- ແຂວງຊຽງຂວາງ: 40 ໂຮງຮຽນ ຈາກ 2 ເມືອງ \| Xieng Khouang Province: 40 schools from 2 districts.<br><br>**ສິ່ງຢັ້ງຢືນ \| Evidence:**<br>- ຮູບພາບຈາກການປະຊຸມ,ວາລະການປະຊຸມ ແລະ ການລົງທະບຽນເຂົ້າຮ່ວມ Meeting photos, agenda<br>- ບົດບັນທຶກການປະຊຸມ ແລະ ການລົງທະບຽນເຂົ້າຮ່ວມ Minutes and attendance form |

| | | |
|---|---|---|
| 2. | ຮັກສາສາຍພົວພັນກັບເອເຊຍຣັກບີ້ ແລະ ຣັກບີ້ໂລກ ເພື່ອພັດທະນາຄວາມຮູ້, ຮັບການຊ່ວຍເຫຼືອ ດ້ານຊັບພະຍາກອນ ແລະ ການເຂົ້າຮ່ວມການແຂ່ງຂັນຢ່າງມີຄຸນນະພາບ<br>Maintain good relationships with Asia Rugby and World Rugby in order to develop knowledge, receive resource support and take part in competitions effectively. | • ເຊີນຄູຝຶກລະດັບສາກົນມາຝຶກໃຫ້ທີມຄູຝຶກລາວ 1 ຄັ້ງ/ປີ.<br>Invite an international coach to train Lao coaches once a year.<br>• ເຂົ້າຮ່ວມການແຂ່ງຂັນ ເອເຊຍຣັກບີ້ 2020-2024: 1 ຄັ້ງ/ປີ.<br>Participate in Asia Rugby competitions between 2020 – 2024 once a year.<br>• ເຂົ້າຮ່ວມອົບຮົມປະຊຸມ ກັບ ເອເຊຍຣັກບີ້ ໃນ 2020-2024: 1 ຄັ້ງ/ປີ.<br>Participate in Asia Rugby meetings and workshops 2020-2024: once per year.<br>• ເຂົ້າຮ່ວມກິດຈະກຳຣັກບີ້ໂລກຜູ້ຍິງຢູ່ນິວຊີແລນ 2021: 1 ຄັ້ງ<br>Send representatives to participate in the Rugby World Cup 2021 (Women's) in New Zealand: 1 time.<br>• ຕາງຫນ້າເຂົ້າຮ່ວມກິດຈະກຳຣັກບີ້ໂລກຜູ້ຊາຍຢູ່ ຟະຣັ່ງ 2023: 1 ຄັ້ງ.<br>Send representatives to participate in the Rugby World Cup 2023 (Men's) in France: 1 time.<br><br>**ສິ່ງຢັ້ງຢືນ \| Evidence:**<br>- ສັນຍາເຮັດວຽກຂອງຄູຝຶກຕ່າງຊາດ,ແຜນການຊ້ອມ ແລະ ຮູບພາບໃນການຊ້ອມ International coach contract, training plan, photos<br>- ຜົນຄະແນນຂອງການແຂ່ງຂັນໃນເວລໄຊ໌ ແລະ ຮູບພາບການແຂ່ງຂັນ Competition results on website, photos<br>- ບົດບັນທຶກການປະຊຸມ ແລະ ບົດລາຍງານພະນັກງານ Meeting minutes or staff report |
| 3. | ສືບຕໍ່ຮ່ວມມືກັບ INGOs, ສະຖານທູດ ແລະ ສະມາຄົມນັກທຸລະກິດ ເພື່ອການ ສະໜັບສະໜູນໃນການຈັດກິດຈະກຳ ຂອງກິລາຣັກບີ້.<br>Continue collaborating with INGOs, embassies, and business associations to support rugby activities. | • ຮ່ວມກັບ INGOs ຈັດຝຶກອົບຮົມ, ແລກປ່ຽນ ແລະ ພັດທະນາບຸກຄະລາກອນ 1 ຄັ້ງ/ປີ.<br>Collaborate with INGOs to organise training, knowledge exchange, and Human Resources development, 1 time/year.<br>• ຮ່ວມກິດຈະກຳກັບ INGOs, ສະຖານທູດ ແລະ ສະມາຄົມນັກທຸລະກິດ 1 ຄັ້ງ/ປີ<br>Participate in activities with INGOs, embassies, and business associations 1 time/year.<br><br>**ສິ່ງຢັ້ງຢືນ \| Evidence:**<br>ບົດບັນທຶກການປະຊຸມ,ບົດລາຍງານພະນັກງານແລະ ຮູບພາບຂອງກິດຈະກຳ Meeting minutes or staff report, Event photos |

| | |
|---|---|
| 4. ຮັບປະກັນການສື່ສານທີ່ມີປະສິດທິພາບ ລະຫວ່າງ ສະຫະພັນ ແລະ ຄູ່ຮ່ວມງານ ຫລັກ ທັງພາຍໃນ ແລະ ສາກົນ.<br>Ensure effective communication between the LRF and key local and international partners. | • ປະຊຸມພົບປະລະຫວ່າງຄູ່ຮ່ວມງານຕ່າງຊາດ,ກັບຄູ່ຮ່ວມງານທີ່ເປັນທາງການຂອງສະຫະພັນ 1 ຄັ້ງ/ປີ.<br>Organise a meeting between international partners once a year (partners that LRF has a formal partnership agreement with).<br>• ປະຊຸມພົບປະລະຫວ່າງຄູ່ຮ່ວມງານພາລັດ (ກະຊວງສຶກສາທິການ ແລະ ກິລາ + ກົມໂອແລັມປິກ) 2 ຄັ້ງ/ປີ.<br>Organise a meeting with government partners (MOES + NOC) 2 times a year.<br>• ສົ່ງບົດລາຍງານປະຈໍາປີ ໃຫ້ພາກລັດ 2 ຄັ້ງ/ປີ<br>Submit biannual reports to government.<br>• ສົ່ງບົດລາຍງານປະຈໍາໄຕມາດ ໃຫ້ພາກສ່ວນທີ່ກ່ຽວຂ້ອງ ເຊັ່ນ ຄູ່ຮ່ວມງານຕ່າງຊາດ,ຣັກບີ້ອາຊີ,ຣັກບີ້ໂລກ,ຊາຍຟັນ ແລະ ຄູ່ຮ່ວມໃຫຍ່ໆຫລືສໍາຄັນ ທີ່ສະຫະພັນເຊັນສັຍາຮ່ວມງານນໍາ.<br>Submit quarterly reports to international partners (Asia Rugby, World Rugby, ChildFund, any other major partners that LRF signs with).<br><br>**ສິ່ງຢັ້ງຢືນ \| Evidence:**<br>ບົດບັນທຶກການປະຊຸມ ແລະ ລົງທະບຽນຄົນເຂົ້າຮ່ວມ Meeting minutes and attendance record<br>Reports |

| **ເປົ້າໝາຍ 6: ສ້າງຄວາມສາມາດໃນການຈັດຕັ້ງຂອງສະຫະພັນກິລາຣັກບີ້ແຫ່ງຊາດລາວ ເພື່ອໃຫ້ມີການ ຄຸ້ມຄອງທີ່ດີ ແລະ ການສະໜັບສະໜູນການ ພັດທະນາ**<br>**Goal 6: Build the LRF’s Organisational Capacity to Best Manage and Support Development** | |
|---|---|
| **ຈຸດປະສົງ/ບຸລິມະສິດ**<br>**Objectives/Priorities** | **ຕົວຊີ້ວັດ**<br>**Indicators** |

<table>
<tr>
<td>1. ປັບປຸງລະບົບການຈັດການ ແລະ ພັດທະ ນາ ພະນັກງານໃຫ້ມີປະສິດທິຜົນ. Improve management systems and develop staff effectively.</td>
<td>
<ul>
<li>ມີລະບົບປະເມີນພະນັກງານທີ່ມີປະສິດທິຜົນ ແລະ ພະນັກງານ/ຄູຝຶກ ໄດ້ ຮັບການປະເມີນ 2 ຄັ້ງ/ປີ.<br>An effective staff performance evaluation system is in place and staff/coaches are evaluated 2 times each year.</li>
<li>ພັດທະນາທັກສະຂອງຫົວໜ້າກຸ່ມ 4 ຄັ້ງ/ປີ.<br>Capacity development for group leaders 4 times a year.</li>
<li>ທົບທວນໜ້າວຽກຂອງພະນັກງານຂອງສະຫະພັນຕາມຂັ້ນຕອນ 1-2 ຄັ້ງ/ປີ.<br>Review LRF staff’s duties in accordance with LRF procedures 1-2 times a year.</li>
<li>ພະນັກງານ/ຄູຝຶກ ທູກຄົນມີໜ້າວຽກ (ToR) ທີ່ເໝາະສົມ.<br>All staff and Coaches have appropriate job descriptions (ToR).</li>
<li>ພັດທະນາ/ປັບປຸງ ນະໂຍບາຍດ້ານການເງິນ ແລະ ການສໍ້ໂກງ.<br>Develop/improve financial and fraud policies.</li>
<li>ຈັດຄູ່ມືການເຮັດວຽກ ຫລື ນະໂຍບາຍຕ່າງໆ ເປັນເອກະສານໄວ້ ສະເພາະຫມວດຫມູ່.<br>Finalise all memos into one LRF Operations Manual for all LRF activities and work.</li>
<li>ປະຊຸມຜູ້ນໍາກຸ່ມ ຜູ້ຈັດການອາວຸໂສ ປະຈໍາເດືອນ (12 ຄັ້ງ/ປີ).<br>Organise monthly meetings for group leaders and senior managers (12 times a year).</li>
</ul>
ສິ່ງຢັ້ງຢືນ | Evidence:
<ul>
<li>ບັນທຶກການປະເມີນວຽກພະນັກງານ Performance records</li>
<li>ແຜນການອົບຮົມ ແລະ ລົງທະບຽນເຂົ້າຮ່ວມ Training plan and attendance record</li>
<li>ບົດບັນທຶກການປະຊຸມ ແລະ ບົດລາຍງານພະນັກງານ Meeting record with each staff member/ department</li>
<li>ຫນ້າວຽກຂອງແຕ່ລະພະນັກງານ TOR for each staff</li>
<li>ເຊັນຮັບຮູ້ ແລະ ປະຕິບັດນະໂຍບາຍ Signed policies</li>
</ul>
</td>
</tr>
</table>

| | |
|---|---|
| 2. ເພີ່ມການມີສ່ວນຮ່ວມຂອງຄະນະຜູ້ບໍລິຫານ ແລະ ຄະນະກຳມະການທີ່ປຶກສາ ໃນການສະໜັບສະໜູນການຈັດຕັ້ງປະຕິ ບັດກິດຈະກຳ ແລະ ການພັດທະນາສະ ຫະພັນລາວຣັກບີ້.<br>Increase participation from the LRF's board members and advisory committee to support the activities and development of LRF. | • ຈັດກອງປະຊຸມປຶກສາຫາລື ກັບຄະນະບໍລິຫານ 2 ຄັ້ງ/ປີ.<br>Organise meetings with board members 2 times a year.<br>• ຄະນະຜູ້ບໍລິຫານເຂົ້າຮ່ວມ (ຫນຶ່ງຫລື ຫລາຍກ່ອນນັ້ນ)ການແຂ່ງຂັນກິລາຈຳປາບານ 2 ຄັ້ງ/ປີ.<br>Board members (1+) participate in or attend Champa Ban competitions 2 times a year.<br>• ພະນັກງານເຂົ້າຮ່ວມ (ຫນຶ່ງຫລື ຫລາຍກ່ອນນັ້ນ)ຝຶກອົບຮົມ 2 ຄັ້ງ/ປີ.<br>Board members (1+) attend staff trainings 2 times a year.<br>• ຜູ້ຈັດການປະຊຸມກັບທີ່ປຶກສາ 4 ຄັ້ງ/ປີ.<br>SMT Meet with advisors 4 times a year.<br>• ຄະນະບໍລິຫານ 2 ທ່ານ ເຂົ້າຮ່ວມງານຂອງສະຫະພັນ.<br>2 board members participate in the LRF's event.<br>• ຈັດງານລ້ຽງຂອງຜູ້ບໍລິຫານ ແລະ ພະນັກງານ 1 ຄັ້ງ/ປີ<br>Organise a party for board members and staff 1 time/year.<br><br>**ສິ່ງຢັ້ງຢືນ \| Evidence:**<br>- ວາລະການປະຊຸມ, ບົດບັນທຶກການປະຊຸມ ແລະ ລິງທະບຽນເຂົ້າຮ່ວມ Agenda, minutes and attendance record |